## ບົດຄວາມ

## ກ່ຽວກັບ ສະພາບການເໜັງຕີງຂອງລາຄານໍ້າມັນເຊື້ອໄຟ ໃນຕະຫຼາດໂລກ ແລະ ການປັບລາຄານໍ້າມັນເຊື້ອໄຟ ພາຍໃນປະເທດ

ພາຍຫຼັງ, ຈັດຕັ້ງປະຕິບັດລາຄານໍ້າມັນເຊື້ອໄຟ ຕາມມະຕິຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 103/ຄປຈ, ລົງວັນທີ 09 ພຶດສະພາ 2022 ໂດຍຫຼຸດອາກອນຊົມໃຊ້ນໍ້າມັນແອັດຊັງທຳມະດາ ຈາກ 31% ມາເປັນ 16% ແລະ ຫຼຸດອາກອນຊົມໃຊ້ນໍ້າມັນກາຊວນ ຈາກ 21% ມາເປັນ 11%, ເຊິ່ງໄດ້ຈັດຕັ້ງປະຕິບັດຄັ້ງວັນທີ 10 ພຶດສະພາ 2022 ຜ່ານມາ ໂດຍປັບຂຶ້ນ ນໍ້າມັນແອັດຊັງພິເສດ 1.580 ກີບ ຕໍ່ ລິດ, ສ່ວນນໍ້າມັນແອັດຊັງທຳມະດາ ປັບລົງ 760 ກີບ ຕໍ່ ລິດ ແລະ ປັບລົງນໍ້າມັນກາຊວນ 170 ກີບ ຕໍ່ ລິດ.

ມາຮອດປະຈຸບັນ, ອີງຕາມການຕິດຕາມ ການເໜັງຕີງລາຄານໍ້າມັນເຊື້ອໄຟໃນຕະຫຼາດໂລກ ເວົ້າລວມ, ເວົ້າສະເພາະ ລາຄານໍ້າມັນເຊື້ອໄຟສຳເລັດຮູບຕະຫຼາດສິງກະໂປ ໂດຍຕິດຕາມລາຄາສະເລ່ຍແຕ່ວັນທີ 09 – 13 ພຶດສະພາ 2022) ສົມທຽບກັບ ລາຄາ CIF (ເປັນເງິນໂດລາສະຫະລັດ) ທີ່ປະຕິບັດຄັ້ງວັນທີ 10 ພຶດສະພາ 2022 ເຫັນວ່າ: ລາຄານໍ້າມັນເຊື້ອໄຟ ຕະຫຼາດໂລກ ຍັງສືບຕໍ່ປັບຂຶ້ນ ຄື:

- ລາຄານໍ້າມັນແອັດຊັງພິເສດ ປັບຂຶ້ນ 0,0295 ໂດລາສະຫະລັດ ຕໍ່ ລິດ (ຄິດເປັນ 3,20%).
- ລາຄານໍ້າມັນແອັດຊັງທຳມະດາ ປັບຂຶ້ນ 0,0412 ໂດລາສະຫະລັດ ຕໍ່ ລິດ (ຄິດເປັນ 3,50%).
- ລາຄານໍ້າມັນກາຊວນ ປັບລົງ 0,0223 ໂດລາສະຫະລັດ ຕໍ່ ລິດ (ຄິດເປັນ 2,12%).

ເມື່ອນຳມາຄິດໄລ່ໃນໂຄງປະກອບລາຄານໍ້າມັນເຊື້ອໄຟ ທີ່ປະກອບດ້ວຍ (1) ພາສີ, (2) ອາກອນຊົມໃຊ້ (ອກຊ), (3) ອາກອນມູນຄ່າເພີ່ມ (ອມພ) ສະບັບປັບປຸງໃໝ່, (4) ກອງທຶນບູລະນະທາງຫຼວງ (ກທ ທາງ), (5) ຄັງແຮ ແລະ (6) ລາຍຮັບ-ລາຍຈ່າຍຂອງພາກທຸລະກິດ (ຄ່າບໍລິການ) ເຮັດໃຫ້ລາຄາຂາຍຍ່ອຍນໍ້າມັນເຊື້ອໄຟພາຍໃນປະເທດ ເວົ້າລວມ, ເວົ້າສະເພາະ ຢູ່ນະຄອນຫຼວງວຽງຈັນ ປັບຂຶ້ນ ຄື:

- ລາຄານໍ້າມັນແອັດຊັງພິເສດ ປັບຂຶ້ນ 1.580 ກີບ ຕໍ່ ລິດ (ຄິດເປັນ 7,12%) ຈາກ 22.190 ກີບ ຕໍ່ ລິດ ປັບຂຶ້ນເປັນ 23. 770 ກີບ ຕໍ່ ລິດ.
- ລາຄານໍ້າມັນແອັດຊັງທຳມະດາ ປັບຂຶ້ນ 1.270 ກີບ ຕໍ່ ລິດ (ຄິດເປັນ 7,34%) ຈາກ 17.300 ກີບ ຕໍ່ ລິດ ປັບຂຶ້ນເປັນ 18.570 ກີບ ຕໍ່ ລິດ.
- ລາຄານໍ້າມັນກາຊວນ ປັບຂຶ້ນ 330 ກີບ ຕໍ່ ລິດ (ຄິດເປັນ 1,85%) ຈາກ 17.830 ກີບ ຕໍ່ ລິດ ປັບຂຶ້ນເປັນ 18.160 ກີບ ຕໍ່ ລິດ.

ເພື່ອເຮັດໃຫ້ການປັບລາຄານໍ້າມັນເຊື້ອໄຟ ເປັນໄປຕາມການເໜັງຕີງຂຶ້ນຂອງຕະຫຼາດໂລກ ຈຶ່ງໄດ້ປັບຂຶ້ນລາຄາຂາຍຍ່ອຍນໍ້າມັນເຊື້ອໄຟ ໃນຂອບເຂດທົ່ວປະເທດໃນຄັ້ງວັນທີ 19 ພຶດສະພາ 2022 ນີ້.

ເຖິງຢ່າງໃດກໍຕາມ ຈາກສະພາບຄວາມຫຍຸ້ງຍາກ ບັນຫາໄພເງິນເຟີ້ ໃນບັນດາປະເທດຕ່າງໆ, ບັນຫາລາຄານໍ້າມັນເຊື້ອໄຟ ໃນຕະຫຼາດໂລກ ເໜັງຕີງເພີ່ມຂຶ້ນສູງ ຈາກສະພາບການປ່ຽນແປງຂອງໂລກ ລວມທັງ ສະພາບການແຜ່ລະບາດຂອງພະຍາດໂຄວິດ 19 ແກ່ຍາວມາເປັນເວລາ 02 ປີກວ່າ ເຊິ່ງມີຜົນກະທົບໂດຍກົງ ຕໍ່ສະພາບການພັດທະນາເສດຖະກິດຂອງຫຼາຍປະເທດ ລວມເຖິງ ສປປ ລາວ ເຮົາ ເປັນສາເຫດເຮັດໃຫ້ການສະໜອງເງິນຕາບໍ່ພຽງພໍກັບຄວາມຕ້ອງການ ເນື່ອງຈາກການຈຳໜ່າຍນໍ້າມັນເຊື້ໄຟ ຢູ່ປໍ້ານໍ້າມັນເຊື້ອໄຟ ແມ່ນເປັນເງິນກີບ, ແຕ່ການຊຳລະຄ່ານໍ້າມັນເຊື້ອໄຟ ໃຫ້ຜູ້ສະໜອງ ຢູ່ຕ່າງປະເທດ ແມ່ນເປັນເງິນຕາ ຈຶ່ງເປັນສາຍເຫດຕົ້ນຕໍ ເຮັດໃຫ້ການນຳເຂົ້ານໍ້າມັນເຊື້ອໄຟ ເພື່ອສະໜອງໃຫ້ແກ່ສັງຄົມໄດ້ຊົມໃຊ້ ບໍ່ໄດ້ຕາມແຜນ ຈຶ່ງເກີດມີສະພາບແຈກຢາຍ ຫຼື ການຈຳໜ່າຍນໍ້າມັນເຊື້ອໄຟ ມີສະພາບບໍ່ພຽງພໍກັບຄວາມຕ້ອງການຂອງສັງຄົມ, ປໍ້ານໍ້າມັນເຊື້ອໄຟ ຈຳນວນໜຶ່ງ ກໍ່ປິດບໍລິການຊົ່ວຄາວ ພາໃຫ້ເກີດສະພາບທົ່ວສັງຄົມຫຼັ່ງໄຫຼ ໄປໃສ່ນໍ້າມັນເຊື້ອໄຟ ຢູ່ປໍ້າທີ່ຍັງເປີດບໍລິການ ພາໃຫ້ເກີດສະພາບຄວາມແອອັດ, ລົດຕໍ່ຄິວລຽນແຖວຍາວ ເປັນໄລຍະເວລາ 3-4 ວັນ.

ຕໍ່ສະພາບການດັ່ງກ່າວ, ລັດຖະບານ ໄດ້ຮີບຮ້ອນຊຸ້ນຂ້ຽວແກ້ໄຂ ເພື່ອຮັບປະກັນໃຫ້ມີການນໍາເຂົ້ານໍ້າມັນເຊື້ອໄຟ ໃຫ້ເປັນປົກກະຕິ ໂດຍໄວ, ແຕ່ໄລຍະນີ້ເຖິງວ່າຈະບໍ່ສາມາດຕອບສະໜອງໄດ້ພຽງພໍທັງໝົດ, ແຕ່ການນໍາເຂົ້າ ກໍ່ເພີ່ມຫຼາຍຂຶ້ນ ເຫັນໄດ້ ຈາກການນໍາເຂົ້ານໍ້າມັນເຊື້ອໄຟ ຜ່ານດ່ານສາກົນຕ່າງໆ ເຊັ່ນ: ດ່ານພາສີສາກົນທ່າບົກທ່ານາແລ້ງ, ດ່ານຂົວມິດຕະພາບນໍ້າເຫືອງ, ດ່ານພາສີສາກົນນໍ້າເງິນ, ດ່ານພາສີສາກົນປາງມອນ, ດ່ານພາສີສາກົນຂົວມິດຕະພາບ 2, ດ່ານພາສີສາກົນຂົວມິດຕະພາບ 3, ດ່ານພາສີສາກົນນໍ້າພາວ (ຫຼັກ 20) ແລະ ດ່ານພາສີສາກົນວັງເຕົ່າ ແມ່ນມີຈໍານວນເພີ່ມຂຶ້ນຕໍ່ອຍ່າງ ໃນວັນທີ 9 ພຶດສະພາ 2022 ໄດ້ນໍາເຂົ້າ ຈໍານວນ 1.137.000 ລິດ, ໃນວັນທີ 10 ພຶດສະພາ 2022 ຈໍານວນ 1.805.603 ລິດ (ເພີ່ມຂຶ້ນ 668.603 ລິດ ທຽບໃສ່ ວັນທີ 9), ໃນວັນທີ 11 ພຶດສະພາ 2022 ຈໍານວນ 2.316.000 ລິດ (ເພີ່ມຂຶ້ນ 510.397 ລິດ ທຽບໃສ່ ວັນທີ 10) ແລະ ວັນທີ 12 ພຶດສະພາ 2022 ຈໍານວນ 2.976.579 ລິດ (ເພີ່ມຂຶ້ນ 660.579 ລິດ ທຽບໃສ່ ວັນທີ 11) ເຫັນໄດ້ວ່າ ໄລຍະ 2-3 ມື້ມານີ້ການນໍາເຂົ້າແມ່ນມີປະລິມານເພີ່ມຂຶ້ນ, ຖ້າສະພາບການນໍາເຂົ້າເພີ່ມຂຶ້ນ, ການສະໜອງພາຍໃນປະເທດກໍຈະກັບເປັນປົກກະຕິໄດ້ໃນໄວໆນີ້, ແຕ່ເຖິງຢ່າງໃດ ກໍຕາມລັດຖະບານ ຈະສືບຕໍ່ ຊີ້ນໍາບັນດາຂະແໜງການກ່ຽວຂ້ອງ ໂດຍສະເພາະບັນດາບໍລິສັດນໍາເຂົ້າ ເພື່ອໃຫ້ສາມາດນໍາເຂົ້າຢ່າງເປັນປົກກະຕິ ແນໃສ່ສາມາດສະໜອງໃຫ້ພຽງພໍກັບຄວາມຕ້ອງການຊົມໃຊ້ ຂອງສັງຄົມ. ຄຽງຄູ່ກັນນັ້ນ, ລັດຖະບານກໍ່ໄດ້ຄົ້ນຄວ້າສະໜອງເງິນຕາ ເພື່ອໃຫ້ແກ່ການຈັດຊື້ນໍ້າມັນເຊື້ອໄຟຈາກຕ່າງປະເທດ ດ້ວຍການໃຫ້ບູລິມະສິດໃຫ້ແກ່ບໍລິສັດນໍາເຂົ້ານໍ້າມັນ ທີ່ໄດ້ຮັບອະນຸຍາດ, ຊອກຫາແຫຼ່ງເງິນຕາເພີ່ມຕື່ມ ເພື່ອແກ້ໄຂບັນຫາການສະໜອງເງິນຕາຈໍາກັດ, ແກ້ໄຂບັນຫາຄ່າເງິນກີບອ່ອນຄ່າ, ອັດຕາແລກປ່ຽນທີ່ເໜັງຕີງໃນປັດຈຸບັນ ເພື່ອຊ່ວຍຫຼຸດຜ່ອນຕົ້ນທຶນການຜະລິດ ແລະ ຂົນສົ່ງສູງຂຶ້ນ ທີ່ຈະສົ່ງຜົນກະທົບກັບຄ່າຄອງຊີບຂອງພໍ່ແມ່ປະຊາຊົນ.

ດັ່ງທີ່ຮູ້ນໍາກັນແລ້ວວ່າ ສປປ ລາວ ເຮົາ ກໍເປັນອີກປະເທດໜຶ່ງ ທີ່ນໍາເຂົ້ານໍ້າມັນເຊືອໄຟ ສໍາເລັດຮູບເພື່ອສະໜອງພາຍໃນ, ການກໍານົດລາຄານໍ້າມັນເຊື້ອໄຟ ຈຶ່ງຖືກກໍານົດ ດ້ວຍຕົ້ນທຶນການນໍາເຂົ້າ, ບັນດາພັນທະຕ່າງໆ ຂອງລັດ ເຊິ່ງປັດຈຸບັນ ໄດ້ຫຼຸດອາກອນຊົມໃຊ້ນໍ້າມັນແອັດຊັງທໍາມະດາ ແລະ ກາຊວ ເພື່ອຊ່ວຍເຮັດໃຫ້ລາຄານໍ້າມັນເຊື້ອໄຟ ຫຼຸດລົງ, ແຕ່ຍ້ອນສະພາບການປ່ຽນແປງຂອງໂລກ ບວກກັບການເໜັງຕີງຂອງອັດຕາແລກປ່ຽນ ຈຶ່ງເຮັດໃຫ້ລາຄານໍ້າມັນເຊື້ອໄຟ ພາຍໃນປະເທດເຮົາຕ້ອງໄດ້ປັບຂຶ້ນ; ກົມການຄ້າພາຍໃນ ຈຶ່ງຂໍຕາງໜ້າກະຊວງອຸດສາຫະກໍາ ແລະ ການຄ້າ ຮຽກຮ້ອງມາຍັງພະນັກງານ, ທະຫານ, ຕໍາຫຼວດ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າ ຈົ່ງມີສະຕິ, ໃນສະພາບຄວາມຫຍຸ້ງຍາກຄືໃຈປະຈຸບັນ ຊ່ວຍກັນຮັບຮູ້ ແລະ ເຂົ້າໃຈສະຖານະການ, ພ້ອມທັງຕິດຕາມສະພາບການຢ່າງໃກ້ຊິດ. ພ້ອມນີ້ ຕ້ອງຊ່ວຍກັນປະຢັດມັດທະຍັດໃຊ້ຈ່າຍໃນສິ່ງທີ່ຈໍາເປັນ ໃນຍາມເຂົ້າຍາກໝາກແພງ ໂດຍສະເພາະແມ່ນການຊົມໃຊ້ທີ່ບໍ່ຈໍາເປັນ ຫລືແບບຟຸມເຟືອຍ. ປະຈຸບັນ, ຫຼາຍໆປະເທດ ແລະ ອົງການຈັດຕັ້ງສາກົນກໍາລັງສົ່ງເສີມໃຫ້ຫຼຸດຜ່ອນການຊົມໃຊ້ ນໍ້າມັນເຊື້ອໄຟ ໂດຍໃຫ້ສິດທິພິເສດທາງດ້ານການຄ້າ, ຍົກເວັ້ນພາສີນໍາເຂົ້າສິນຄ້າ, ການເຂົ້າເຖິງກອງທຶນ ແລະ ອື່ນໆ. ສະນັ້ນ, ພວກເຮົາທັງໝົດ ກໍຕ້ອງໄດ້ເລີ່ມຫັນເຂົ້າສູ່ທິດທາງ ແລະ ທ່າອ່ຽງ ຂອງສາກົນ ຄ່ອຍໆຫຼຸດຜ່ອນການເພິ່ງພາອາໄສນໍ້າມັນເຊື້ອໄຟລົງເທື່ອລະກ້າວ ແລະ ຫັນໄປສູ່ການຊົມໃຊ້ພະລັງງານສະອາດນັບມື້ຫຼາຍຂຶ້ນ, ເປັນຕົ້ນແມ່ນການຫັນໄປຊົມໃຊ້ພາຫະນະ, ລົດຂົນສົ່ງດ້ວຍໄຟຟ້າ, ຫັນຂົນສົ່ງສິນຄ້າດ້ວຍທາງລົດໄຟ ເພື່ອປະຢັດຄ່າຂົນສົ່ງ ແລະ ໄດ້ປະລິມານຫລາຍຂຶ້ນ, ຫັນໄປສູ່ການຊົມໃຊ້ນໍ້າມັນເຊື້ອໄຟຊີວະພາບ ແລະ ອື່ນໆ. ເຂົ້າຮ່ວມໃນຂະບວນການພັດທະນາ ແລະ ການດໍາລົງຊີວິດແບບຍືນຍົງ, ສົ່ງເສີມການຜະລິດສະອາດ ຕາມທິດສີຂຽວ ໂດຍນໍາໃຊ້ພະລັງງານທາງເລືອກອື່ນທີ່ຍືນຍົງ.

ພ້ອມດຽວກັນນີ້, ກໍຮຽກຮ້ອງມາຍັງບັນດາຜູ້ປະກອບການທັງໝົດ ຈົ່ງຢ່າໄດ້ສວຍ ໂອກາດຂຶ້ນລາຄາສິນຄ້າຕາມລໍາພັງໃຈ ແລະ ກັກຕຸນສິນຄ້າ ກໍຄືນໍ້າມັນເຊື້ອໄຟ ເອົາປຽບຜູ້ຊື້ໃນໄລຍະທີ່ລາຄານໍ້າມັນເຊື້ອໄຟເໜັງຕີງຂຶ້ນ ແລະ ຫຼາຍຄົນກໍພົບກັບສະພາບຂໍ້ຫຍຸ້ງຍາກຫຼາຍຢ່າງ ທີ່ມາພ້ອມກັບໂຄວິດ-19. ສະນັ້ນ, ທຸກຄົນ ແລະ ທຸກພາກສ່ວນ ຈົ່ງຊ່ວຍເຫຼືອເຊິ່ງກັນ ແລະ ກັນ ເພື່ອພ້ອມກັນກ້າວຜ່ານວິກິດການໃນຄັ້ງນີ້. ພ້ອມກັນນັ້ນ, ກໍຊ່ວຍເປັນຫູເປັນຕາ ຫາກພົບເຫັນ ການສວຍໂອກາດຂຶ້ນລາຄາສິນຄ້າ ທ່ານສາມາດ ໂທແຈ້ງສາຍດ່ວນ 1510 ແລະ ເວັບໄຊປົກປ້ອງຜູ້ຊົມໃຊ້ WWW.lcp.gov.la ເຊິ່ງເຈົ້າໜ້າທີ່ກ່ຽວຂ້ອງ ຈະໄດ້ໃຊ້ມາດຕະການຕໍ່ຜູ້ລະເມີດ ຕາມກົດໝາຍ ແລະ ລະບຽບການ.